ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONGTONGSAVAT RD , BAN PHONGTONGSAVAT, CHANTHABULY DISTRICT, VTE
OFFICE TEL: (85621) 415645, FAX / TEL: (85621) 262 984 , WEBSITE.SOUVANNY.COM

ຂ່າວປະຊາສຳພັນ **ວັນທີ 12 ກຸມພາ 2016**

"ສຸວັນນີ ໂຮມເຊັນເຕີ ມະຫາຊົນ" ຈັບມື "ສະຕາມາກ" ເປີດໂຕຊຸດຄົວແບບຝັງເຄົາເຕີສຳເລັດຮູບ ແລະ ຄົວອະເນກປະສົງ (DIY)
ເຊື່ອວ່າຈະໄດ້ຮັບການຕອບຮັບຈາກລູກຄ້າພາຍໃນ ສ ປ ປ ລາວ ໄດ້ເປັນຢ່າງດີ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ຮ່ວມກັບ ບໍລິສັດ ສະຕາມາກ ເມນນູແຝກເຈີລິງ ຈຳກັດ ຜູ້ອອກແບບຜະລິດເຟີນີເຈີຄົວພາຍໃຕ້ແບຣນ "ສະຕາມາກ" ເປີດໂຕຊຸດເຄື່ອງຄົວແບບຝັງເຄົາເຕີ ສຳເລັດຮູບ ແລະ ຊຸດເຄື່ອງຄົວອະເນກປະສົງ (DIY) ຫວັງເພີ່ມຍອດຂາຍ ແລະ ເຊື່ອວ່າຈະໄດ້ຮັບການຕອບຮັບຈາກລູກຄ້າໃນ ສ ປ ປ ລາວ ເປັນຢ່າງດີ.

ທ່ານ ວັດດານາ ສຸຄະບັນດິດ ຮອງປະທານສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຫຼື SVN ຜູ້ດຳເນີນທຸລະກິດຈຳໜ່າຍສິນຄ້າ ແລະ ບໍລິການດ້ານວັດສະດຸກໍ່ສ້າງ ຕົບແຕ່ງບ້ານ ແລະ ອາຄານແບບຄົບວົງຈອນ ເຊິ່ງຈຳໜ່າຍພາຍໃຕ້ສູນວາງສະແດງສິນຄ້າທີ່ໃຫຍ່ ແລະ ທັນສະໄໝ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ "ສຸວັນນີ" ທີ່ເປັນອັນດັບໜຶ່ງ ໃນ ສ ປ ປ ລາວ ແລະ ຍັງຈຳໜ່າຍ ອຸປະກອນເຄື່ອງມືຊ່າງ, ເຟີນີເຈີ, ລິບ ແລະ ບັ້ນໄດເລື່ອນ ເປີດເຜີຍວ່າ ບໍລິສັດໄດ້ຮ່ວມກັບ ສະຕາມາກ ເມນນູແຝກເຈີລິງ ຈຳກັດ ຜູ້ອອກແບບ ແລະ ຜະລິດເຟີນີເຈີຄົວ ພາຍໃຕ້ແບຣນ ສະຕາມາກ ເປີດໂຕເຄື່ອງຄົວ ເຊິ່ງຊຸດເຄື່ອງຄົວດັ່ງກ່າວມີຫຼາກຫຼາຍຮູບແບບໃຫ້ເລືອກ ທັງ ແບບທັນສະໄໝ, ຄລາດສິກ ແລະ ແບບຄົວລາວ. ເຊິ່ງສາມາດອອກແບບ ແລະ Designໃຫ້ລົງຕົວກັບພື້ນທີ່ ຫ້ອງຄົວລວມເຖິງການເລືອກໃຊ້ຟັງຊັ່ນອຸປະກອນເສີມຕ່າງໆທີ່ໃຫ້ການຈັດເກັບສິ່ງຂອງຕ່າງໆພາຍໃນຫ້ອງຄົວທີ່ເປັນ ລະບຽບ ແລະ ງ່າຍຕໍ່ການນຳໃຊ້ງານ

ນອກຈາກນີ້ຍັງມີເຄື່ອງຄົວສຳເລັດຮູບ ທີ່ເນັ້ນການອອກແບບທີ່ເໝາະກັບການໃຊ້ຊີວິດໃນຍຸກປະຈຸບັນ ເຊິ່ງ ເປັນການລວມເອົາຮູບແບບທີ່ໄດ້ຮັບຄວາມນິຍົມມາລວມຢູ່ໃນຊຸດຄົວຂະໜາດກະທັດຮັດສວຍງາມດ້ວຍການອອກ ແບບທີ່ທັນສະໄໝໃຊ້ງານໄດ້ຢ່າງສະດວກສະບາຍບໍ່ວ່າຈະຢູ່ໃນພື້ນທີ່ຈຳກັດ. ຊຸດເຄື່ອງອະເນກປະສົງ (DIY) ເປັນ ການອອກແບບຈັດງານທີ່ມີເອກະລັກສະເພາະ ແລະ ສາມາດເລືອກຕໍ່ເຕີມໄດ້ຕາມລັກສະນາຂອງການໃຊ້ງານຕົວ ຈິງ.

ບໍລິສັດ ສະຕາມາກ ເມນນູແຝກເຈີລິງ ຈຳກັດ ກໍ່ຕັ້ງຂຶ້ນເມື່ອປີ ຄ ສ 1982 ດ້ວຍປະສົບການຄວາມ ຊ່ຽວຊານດ້ານການຊຳນານງານ ພັດທະນາຂະບວນການຜະລິດດ້ວຍເທັກໂນໂລຊີເຄື່ອງຈັກທີ່ທັນສະໄໝ ການ